ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

************************

ສຳນັກງານນາຍົກລັດຖະມົນຕີ

ເລກທີ 96 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 20.03.2007

# ດຳລັດ

## ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ ຍຸດທະສາດການທ່ອງທ່ຽວ 2006- 2020 ຂອງ ສປປ ລາວ

- ອີງຕາມກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06/03/2003.
- ອີງຕາມກົດໝາຍວ່າດ້ວຍການທ່ອງທ່ຽວ ສະບັບເລກທີ 10/ສພຊ, ລົງວັນທີ 9/11/2005.
- ອີງຕາມເອກະສານນຳສົ່ງຂອງ ອົງການທ່ອງທ່ຽວແຫ່ງຊາດ ສະບັບເລກທີ 0180 /ອທຊ ລົງວັນທີ 23/02/2006

## ນາຍົກລັດຖະມົນຕີ ອອກດຳລັດ:

**ມາດຕາ 01** ຮັບຮອງ ແລະ ປະກາດໃຊ້ ຍຸດທະສາດການທ່ອງທ່ຽວ 2006-2020 ຂອງ ສປປ ລາວ ສະບັບເດືອນ ກໍລະກົດ ປີ 2006 ຢ່າງ ເປັນທາງການ.

**ມາດຕາ 02** ມອບໃຫ້ ອົງການທ່ອງທ່ຽວແຫ່ງຊາດ ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຍຸດທະສາດການທ່ອງທ່ຽວ 2006-2020 ຂອງ ສປປ ລາວ ໃຫ້ປະກົດຜົນເປັນຈິງ.

**ມາດຕາ 03** ບັນດາ ກະຊວງ, ອົງການທຽບເທົ່າ, ແຂວງ, ນະຄອນຫຼວງວຽງຈັນແລະພາກສ່ວນທີ່ກ່ຽວຂ້ອງອື່ນໆ ຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດດຳລັດ ສະບັບນີ້ ໃຫ້ປະກົດຜົນ ເປັນຢ່າງດີ.

**ມາດຕາ 05** ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ ວັນລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

ບົວສອນ ບຸບຜາວັນ